ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0141/ກປ

ນະຄອນຫຼວງວຽງຈັນ, ວັນທີ 18 ພະຈິກ 2010

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການກວດກາ ແລະ ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້

- ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 01/ສພຊ, ລົງວັນທີ 15 ພຶດສະພາ 2004;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມການຄົ້ນຄວ້ານຳສະເໜີ ຂອງກົມກວດກາປ່າໄມ້ ສະບັບເລກທີ 0858/ກກ.ປມ, ລົງວັນທີ 01 ພະຈິກ 2010.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້:**

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຮູບການ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດວຽກງານກວດກາ ແລະ ດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອແນໃສ່ຕິດຕາມການເຄື່ອນໄຫວຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ, ສັດປ່າ ຂອງບຸກຄົນ, ການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນບັນດາເຜົ່າ, ການດຳເນີນທຸລະກິດກ່ຽວກັບປ່າໄມ້, ສັດນໍ້າ ແລະ ສັດປ່າ ພ້ອມທັງດຳເນີນການສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອ...

ເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ບໍ່ປະປ່ອຍໃຫ້ຜູ້ກະທຳຜິດລົບຫຼີກອອກຈາກການລົງໂທດໄປໄດ້ ແລະ ຫຼີກເວັ້ນ ການລົງໂທດຜູ້ບໍ່ໄດ້ກະທຳຜິດ.

ມາດຕາ 2. **ການກວດກາ ແລະ ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້** ການກວດກາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການຕິດຕາມການເຄື່ອນໄຫວ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ ຂອງບຸກຄົນ, ການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ ບັນດາເຜົ່າ ລວມທັງ ການດຳເນີນທຸລະກິດກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

ການດຳເນີນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ປ່າໄມ້, ສັງກັດຢູ່ກົມກວດກາປ່າໄມ້ ໃນການດຳເນີນຄະດີຜູ້ທີ່ລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ບັນດານິຕິກຳອື່ນໆກ່ຽວກັບຊັບພະຍາກອນປ່າໄມ້ ແນໃສ່ຮັບປະກັນປົກປ້ອງກົດໝາຍ ແລະ ນິຕິກຳດັ່ງກ່າວໃຫ້ສັກສິດໃນຂອບເຂດທົ່ວປະເທດ ກໍຄືໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ມາດຕາ 3. **ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປ່າໄມ້** ໝາຍເຖິງຊັບພະຍາກອນທຳມະຊາດອັນລ້ຳຄ່າ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍ: ຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້ ໂດຍມີຕົ້ນໄມ້ນາໆຊະນິດ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
2. **ຊັບພະຍາກອນປ່າໄມ້** ໝາຍເຖິງຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍ: ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆທີ່ມີທັງໝົດຢູ່ໃນເຂດທີ່ດິນປ່າໄມ້;
3. ການດຳເນີນຄະດີອາຍາກ່ຽວກັບຊັບພະຍາກອນປ່າໄມ້ ແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີ ເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍ ຢ່າງຖືກຕ້ອງ, ຍຸຕິທຳ ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫຼົບຫຼີກອອກຈາກການລົງໂທດໄປໄດ້ ແລະ ຫຼີກເວັ້ນການລົງໂທດຜູ້ບໍ່ໄດ້ກະທຳຜິດ;

4. ການດຳເນີນການສືບສວນ - ສອບສວນຄະດີກ່ຽວກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໝາຍເຖິງການເຄື່ອນໄຫວປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ປ່າໄມ້ ເຊັ່ນ: ການຮັບ ແລະ ບັນທຶກການແຈ້ງຄວາມກ່ຽວກັບການກະທຳຜິດ, ການອອກຄຳສັ່ງເປີດການສືບສວນ - ສອບສວນ, ການດຳເນີນການສືບສວນ - ສອບສວນ ແລະ ນຳໃຊ້ມາດຕະການຕ່າງໆທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
5. **ເຈົ້າໜ້າທີ່ປ່າໄມ້** ໝາຍເຖິງພະນັກງານສັງກັດຢູ່ອົງການກວດກາປ່າໄມ້ ແລະ ທີ່ດິນປ່າໄມ້ (ກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້) ຊຶ່ງມີໜ້າທີ່ກວດກາ ແລະ ດຳເນີນການສືບສວນ-ສອບສວນຄະດີກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ;
6. **ເຈົ້າໜ້າທີ່ສັດນ້ຳ ແລະ ສັດປ່າ** ໝາຍເຖິງພະນັກງານທີ່ເຮັດໜ້າທີ່ກວດສັດນ້ຳ ແລະ ສັດປ່າ;
7. **ສະໜາມ I** ໝາຍເຖິງສະຖານທີ່ທ້ອນໂຮມໄມ້ທ່ອນທີ່ໄດ້ຊັກລາກຈາກບ່ອນຕັດປ່າ ໃນສະຖານທີ່ຂຸດຄົ້ນໄມ້ ຕາມແຜນການຂຸດຄົ້ນ;
8. **ສະໜາມ II** ໝາຍເຖິງສະຖານທີ່ທ້ອນໂຮມໄມ້ ທີ່ໄດ້ຂົນສົ່ງມາຈາກສະໜາມ I ຊຶ່ງສາມາດຕອບສະໜອງໃຫ້ແກ່ການຂົນສົ່ງໄປຫາໂຮງງານປຸງແຕ່ງ ໄດ້ຕະຫຼອດປີ ແລະ ມີຄວາມປອດໄພສູງຈາກໄພທຳມະຊາດ ແລະ ອຸປະຕິເຫດອື່ນໆ ພ້ອມທັງເປັນບ່ອນຕົບແຕ່ງ ແລະ ຂຶ້ນບັນຊີຈັດຊັ້ນຄຸນນະພາບໄມ້;
9. **ສະໜາມ III** ໝາຍເຖິງສະໜາມທ້ອນໂຮມໄມ້ຢູ່ໂຮງງານປຸງແຕ່ງໄມ້ ຫຼື ສາງຂອງໂຮງງານປຸງແຕ່ງໄມ້;
10. **ຄ້ອນກາ ປມ** ໝາຍເຖິງຄ້ອນກາທີ່ມີລັກສະນະເປັນວົງມົນ, ມີຮູບດາວ ແລະ **ຕົວໜັງສື ປມ (ປ່າໄມ້)** ຢູ່ເຄິ່ງກາງຂອງຮູບດາວ ແລະ ມີເລກລະຫັດຢູ່ເບື້ອງເທິງຂອງດາວ ຊຶ່ງໃຊ້ຕີກາໄມ້ຢືນຕົ້ນ, ໄມ້ທ່ອນ, ໄມ້ເລື່ອຍ, ຕໍໄມ້ ແລະ ປູດໄມ້ ເພື່ອເຄື່ອນຍ້າຍເຂົ້າບ່ອນດຳເນີນການຜະລິດ ແລະ ເຄື່ອນຍ້າຍໄປແຂວງຕ່າງໆພາຍໃນປະເທດ;
11. **ຄ້ອນກາ ປມລ** ໝາຍເຖິງຄ້ອນກາທີ່ມີລັກສະນະເປັນວົງມົນ, ມີຕົວໜັງສື ປມລ (ປ່າໄມ້ລາວ) ຢູ່ເຄິ່ງກາງ, ໃຊ້ຕີກາໄມ້ທ່ອນ, ໄມ້ເລື່ອຍ, ປູດໄມ້ ແລະ ຕໍໄມ້ ເພື່ອສົ່ງອອກຕ່າງປະເທດ.